**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້
ກົມປ່າໄມ້

2347

ເລກທີ:................/ກປມ
ນະຄອນຫລວງວຽງຈັນ, ວັນທີ: 26 MAY 2023

# ໜັງສືແຈ້ງເຊີນປະມູນ

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ທຶນກູ້ຢືມຈາກທະນາຄານໂລກ ສໍາລັບ ການຈັດຕັ້ງປະຕິບັດ ໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ ເຊິ່ງທາງ ໂຄງການໄດ້ຮັບອະນຸມັດງົບປະມານ ແລະ ມີຈຸດປະສົງນໍາໃຊ້ ເຂົ້າໃນການປະມູນຈັດຊື້ ແລະ ສະໜອງ ພາຫະນະປະເພດລົດຈັກ.
2. ກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້ ຂໍຖືເປັນກຽດເຊີນ ບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊ່ອງປະມູນ ສໍາລັບ ການຈັດຊື້ ແລະ ສະໜອງ ພາຫະນະປະເພດລົດຈັກ ໃຫ້ແກ່ໂຄງການພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ.
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງ ພາຍໃນຕາມທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017, ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄູ່ມືແນະນໍາ: ຂອງທະນາຄານໂລກ ວ່າດ້ວຍຫລັກການ ການຈັດຊື້ - ຈັດຈ້າງ ສໍາລັບ ປະເທດຜູ້ກູ້ຢືມ (Procurement Regulations for IPF Borrowers), ສະບັບເດືອນ ກໍລະກົດ 2016 ການປະມູນແມ່ນເປີດໃຫ້ຜູ້ປະມູນທຸກໆ ບໍລິສັດ ທີ່ມີຄວາມເໝາະສົມ ຕາມບົດແນະນໍາວ່າດ້ວຍການຈັດຊື້ - ຈັດຈ້າງ. ພ້ອມກັນນັ້ນໃຫ້ເບິ່ງຫຍໍ້ໜ້າ 3.15, 3.18 ແລະ 3.19 ທີ່ກໍານົດໄວ້ ໃນນະໂຍບາຍ ຂອງທະນາຄານໂລກ ວ່າດ້ວຍການມີຜົນປະໂຫຍດຊໍ້າຊ້ອນ.
4. ບໍລິສັດທີ່ມີຄວາມເໝາະສົມ ອາດຈະຂໍຂໍ້ມູນເພີ່ມເຕີມ ຫຼື ຂໍເອກະສານປະມູນ ຈາກໂຄງການພູມີທັດ ແລະ ຊີວິດກົມປ່າໄມ້ ແລະ ໃນເວລາໂມງລັດຖະການແຕ່ 08:00 ຫາ 16:00 ໂມງ ຕາມທີ່ຢູ່ຂ້າງລຸ່ມນີ້.
5. ບໍລິສັດທີ່ມີຄວາມເໝາະສົມ ສາມາດຕິດຕໍ່ພົວພັນຮັບເອກະສານປະມູນຄົບຊຸດເປັນພາສາລາວ ໂດຍຍື່ນໜັງສືຫາທີ່ຢູ່ຂ້າງລຸ່ມນີ້.
6. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ ກ່ອນເວລາ 10:00 ໂມງ, ວັນທີ 12 ກໍລະກົດ 2023. ການສົ່ງເອກະສານປະມູນດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ຊອງປະມູນຈະເປີດໃນເວລາ 10:00 ໂມງ ຂອງມື້ດຽວກັນ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ໆກໍານົດໄວ້ຂ້າງລຸ່ມນີ້.
7. ທຸກໆເອກະສານຈະຕ້ອງປະກອບແຈ້ງການຄໍ້າປະກັນການປະມູນດ້ວຍກຽດ.
8. ທ່ານສາມາດຕິດຕໍ່ພົວພັນ ແລະ ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ ໂຄງການພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ, ກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້, ບ້ານສີສະເກດ, ຄຸ້ມທາດດໍາ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ. ຕິດຕໍ່ພົວພັນ ທ່ານ ລັດຕະນະ ທໍາມະວົງສາ ຜູ້ປະສານງານໂຄງການ ໄດ້ທີ່ ໂທລະສັບ: (+856) 21 215002 ອີເມວ: latthamlong09@gmail.com.

ຮ/ກ **ຫົວໜ້າກົມ**

ກົມປ່າໄມ້

**ບຸນປອນ ແສງທອງ**